ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມສຳມະນາວິຊາການ ໃນຫົວຂໍ້ "ການຄຸ້ມຄອງລະບົບການຊໍາລະ"



ໃນວັນທີ 09 ທັນວາ 2022 ທີ່ທະນາຄານແຫ່ງ ສປປ ລາວ, ສາມອົງການຈັດຕັ້ງມະຫາຊົນ ກົມຄຸ້ມຄອງລະບົບຊໍາລະສະສາງ ໄດ້ຈັດກອງປະຊຸມສໍາມະນາວິຊາການຂຶ້ນ ໃນຫົວຂໍ້ **"ການຄຸ້ມຄອງລະບົບການຊໍາລະ"** ໂດຍການເປັນປະທານຂອງທ່ານສະຫາຍ ນ. ລໍາມອນ ສິມມະໄລວົງ, ຮອງເລຂາ ແລະ ຜູ້ກວດກາໜ່ວຍພັກຮອງຫົວໜ້າກົມທັງ ເປັນຜູ້ຊີ້ນໍາວຽກງານສາມອົງການຈັດຕັ້ງມະຫາຊົນ, ກົມຄຸ້ມຄອງລະບົບຊໍາລະສະສາງ, ທະນາຄານແຫ່ງ ສປປ ລາວ, ມີຜູ້ເຂົ້າຮ່ວມຕາງ ໜ້າຈາກຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ, ຄະນະສະຫະພັນກໍາມະບານຮາກຖານ ທຫລ, ຕາງໜ້າຈາກຄະນະສະຫະພັນແມ່ຍິງຮາກຖານ ທຫລ ແລະ ສະມາຊິກສາມອົງການຈັດຕັ້ງມະຫາຊົນຈາກບັນດາກົມພາຍໃນ ທຫລ ລວມຈໍານວນທັງໝົດ 57 ທ່ານ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ແມ່ນເພື່ອເປັນການເຜີຍແຜ່ກ່ຽວກັບວຽກງານລະບົບການຊໍາລະ ເຊິ່ງວຽກງານດັ່ງກ່າວແມ່ນຈັດຢູ່ໜຶ່ງໃນສາມວຽກງານຫຼັກຂອງ ທະນາຄານແຫ່ງ ສປປ ລາວ (ທຫລ). ໃນນັ້ນ, ການສໍາມະນາໄດ້ລົງເລິກວຽກງານການຄຸ້ມຄອງວຽກງານລະບົບການຊາລະ ແລະ ທິດທາງການພັດທະນາລະບົບການຊໍາລະໃນອະນາຄົດ ແລະ ພາບລວມການເຄື່ອນໄຫວຂອງ ບໍລິສັດລາວເນເຊິນນໍ ເພເມັ້ນເນັດເວີກຈໍາກັດ (LAPNet); ຊຶ່ງເປັນບໍລິສັດໜຶ່ງທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ເຮັດໜ້າທີ່ເປັນຜູ້ຄວບຄຸມລະບົບການຊໍາລະທຸລະກໍາຍ່ອຍ ຂອງ ສປປ ລາວ. ປັດຈຸບັນບໍລິສັດດັ່ງກ່າວໄດ້ໃຫ້ບໍລິການລະບົບການຊໍາລະທັງໝົດ 02 ລະບົບ ຄື: ລະບົບບັດ

ທະນາຄານຮ່ວມກັນ (Lao ATM Pool Switching: LAPS) ແລະ ລະບົບຊໍາລະຂ້າມທະນາຄານເທິງມືຖື (Lao Mobile Payment Switching: LMPS).




ກອງປະຊຸມດັ່ງກ່າວໄດ້ດໍາເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດອົບອຸ່ນ ຊຶ່ງເປັນຂີດໝາຍສໍາຄັນສໍາລັບ ໜ່ວຍຊາວໜຸ່ມ ທຫລ ຂອງພວກເຮົາ ເພື່ອຮຽນຮູ້, ແລກປ່ຽນບົດຮຽນ ແລະ ປະກອບຄໍາເຫັນທາງດ້ານວິຊາສະເພາະ ຕໍ່ກັບວຽກງານການຊໍາລະຂອງ ສປປ ລາວ ທີ່ໄດ້ຈັດຕັ້ງປະຕິບັດສໍາເລັດໃນ 5 ປີຜ່ານມາ, ພ້ອມທັງກໍານົດທິດທາງໜ້າທີ່ໃນ 5 ປີຕໍ່ໜ້າໃນການຄຸ້ມຄອງລະບົບການຊໍາລະຂອງ ສປປ ລາວ ເພື່ອເຮັດໃຫ້ເປັນລະບົບຄົບຊຸດ ສາມາດເຊື່ອມໃຊ້ລະບົບຮ່ວມກັນ ທັງພາຍໃນພາກພື້ນ ແລະ ສາກົນໃນເທື່ອລະກ້າວ.

**ໂດຍ: ສົມພິດ ທໍາມະວົງ**

*ຢູ່ເມືອງລາວໃຊ້ກີບລາວ*